**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 354 /ອຄ.ກຂອ.

ນະຄອນຫຼວງວຽງຈັນ, ວັນທີ 16 ມິຖຸນາ 2023

# ຂໍ້ຕົກລົງ

**ວ່າດ້ວຍ ການປະກາດໃຊ້ ລະບຽບສະເພາະຂອງຜະລິດຕະພັນ (Product Specific Rules: PSRs), ບັນຊີລາຍການສິນຄ້າຕັດຫຍິບ (Textile Single List) ແລະ ບັນຊີລາຍການສິນຄ້າເຕັກໂນໂລຊີຂໍ້ມູນຂ່າວສານ (Information Technology Agreement: ITA) ຈາກສາລະບານສິນຄ້າລະບົບເອກະພາບຂອງອາຊຽນ AHTN 2017 ມາເປັນລະບົບ AHTN 2022 ພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ (ATIGA)**

- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 604/ນຍ, ລົງວັນທີ 15 ຕຸລາ 2021;
- ອີງຕາມ ດຳລັດ ວ່າດ້ວຍ ແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ, ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010;
- ອີງຕາມ ໜັງສືສະເໜີຂອງ ກົມການນຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 10612/ກຂອ.ອຄ ລົງວັນທີ 07 ມິຖຸນາ 2023.

**ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

**ມາດຕາ 1.** ປະກາດໃຊ້ລະບຽບສະເພາະຜະລິດຕະພັນ (Product Specific Rules: PSRs), ບັນຊີລາຍການສິນຄ້າຕັດຫຍິບ (Textile Single List) ແລະ ບັນຊີລາຍການສິນຄ້າເຕັກໂນໂລຊີຂໍ້ມູນຂ່າວສານ (Information Technology Agreement: ITA) ຈາກສາລະບານສິນຄ້າລະບົບເອກະພາບຂອງອາຊຽນ AHTN 2017 ມາເປັນລະບົບ AHTN 2022 ພາຍໃຕ້ສັນຍາການຄ້າດ້ານສິນຄ້າຂອງອາຊຽນ (ATIGA).

**ມາດຕາ 2.** ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ແນະນຳ ແລະ ເຜີຍແຜ່ວິທີຈັດຕັ້ງປະຕິບັດລະອຽດ ໃຫ້ພາກສ່ວນກ່ຽວຂ້ອງຢ່າງທົ່ວເຖິງ ເພື່ອໃຫ້ຂໍ້ຕົກລົງສະບັບນີ້ໄດ້ຮັບການຈັດຕັ້ງປະຕິບັດຢ່າງໄດ້ຮັບຜົນດີ.

**ມາດຕາ 3.** ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ເລີ່ມແຕ່ວັນທີ 01 ເມສາ 2023 ເປັນຕົ້ນໄປ.

ລັດຖະມົນຕີ

ຈັນສຸກ ແສງພະຈັນ